ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງຈໍາປາສັກ

ພະແນກກະສິກໍາ ແລະ ສິ່ງແວດລ້ອມ

ເລກທີ --2037/ກສຂ

ຈໍາປາສັກ, ວັນທີ 15-06-2026

# ໜັງສືແຈ້ງເຊີນປະມູນ

**ເຖິງ: ບັນດາບໍລິສັດ ທີ່ດໍາເນີນກິດຈະການກໍ່ສ້າງ-ສ້ອມແປງຊົນລະປະທານ ພາຍໃນແຂວງຈໍາປາສັກ.**

**ເລື່ອງ: ເຊີນເຂົ້າຮ່ວມປະມູນ ໂຄງການກໍ່ສ້າງ-ສ້ອມແປງລະບົບຊົນລະປະທານ ທີ່ໄດ້ຮັບອະນຸມັດ ໂຄງການລົງທຶນຂອງລັດ ປະຈໍາປີ 2026**

- ອີງຕາມ: ຕາມກົດໝາຍວ່າດ້ວຍການລົງທຶນຂອງລັດ (ສະບັບປັບປຸງ) ສະບັບເລກທີ 72/ສພຊ ລົງວັນທີ 15 ທັນວາ 2015.
- ອີງຕາມ: ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ ລົງວັນທີ 2 ພະຈິກ 2017.
- ອີງຕາມ: ແຈ້ງການຂອງພະແນກການເງິນແຂວງ ສະບັບເລກທີ: 880/ກງຂ ລົງວັນທີ: 11 ມິຖຸນາ 2026 ແລະ ສະບັບເລກທີ: 1099/ກງຂ ລົງວັນທີ: 6 ກໍລະກົດ 2026.

ພະແນກກະສິກໍາ ແລະ ສິ່ງແວດລ້ອມແຂວງ ຈໍາປາສັກ ຂໍຖືເປັນກຽດເຊີນບັນດາບໍລິສັດ ນິຕິບຸກຄົນ ທີ່ດໍາເນີນກິດຈະການກໍ່ສ້າງ-ສ້ອມແປງລະບົບຊົນລະປະທານ ພາຍໃນແຂວງຈໍາປາສັກ ທີ່ມີຄວາມສົນໃຈ ເຂົ້າຮ່ວມການປະມູນໂຄງການກໍ່ສ້າງ-ສ້ອມແປງລະບົບຊົນລະປະທານ ໃນບ້ວງງົບປະມານການລົງທຶນຂອງລັດ ທີ່ໄດ້ຮັບອະນຸມັດຈາກສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງແລ້ວ ໃນປີ 2026 ຈໍານວນ 4 ໂຄງການດັ່ງນີ້:

1. ຄ.ກ ຟື້ນຟູ-ສ້ອມແປງຊົນລະປະທານ ບ້ານງິ້ວແດງ ເມືອງຊະນະສົມບູນ
2. ຄ.ກ ຟື້ນຟູ-ສ້ອມແປງຊົນລະປະທານ ບ້ານສັກເມືອງ ມ. ໂພນທອງ
3. ຄ.ກ ກໍ່ສ້າງຝາຍນໍ້າລົ້ນ ບ້ານເລົ່າຫຍ້າ ມ. ປະທຸມພອນ.
4. ຄ.ກ ຟື້ນຟູ-ສ້ອມແປງຊົນລະປະທານ ບ້ານດອນໂລງ ມ. ໂຂງ

ໃນການປະມູນແມ່ນ ຮູບແບບເປີດກວ້າງ ຕາມທີ່ກໍານົດໄວ້ ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກ 30/ສພຊ ລົງວັນທີ 2 ພະຈິກ 2017, ບໍລິສັດທີ່ຕ້ອງການເຂົ້າຮ່ວມປະມູນ ສາມາດຊື້ຊອງປະມູນຄົບຊຸດ ໄດ້ທີ່ຂະແໜງຊົນລະປະທານແຂວງ ນະຄອນປາກເຊ ແຂວງຈໍາປາສັກ ເລີ່ມແຕ່ 6 ມິຖຸນາ 2026 ຫາວັນທີ 20 ສິງຫາ 2026 ໃນວັນເວລາທາງລັດຖະການ, ເອກະສານປະມູນທີ່ຊື້ໄປແລ້ວ ຕ້ອງປະກອບເອກະສານຕ່າງໆ ໃຫ້ຄົບຖ້ວນ ຕາມທີ່ກໍານົດໃນບົດແນະນໍາ ກ່ຽວກັບການປະມູນ ພ້ອມໃສ່ຊອງປິດຢ່າງມິດຊິດ



AnyScanner

4). ມີພະນັກງານວິຊາການ, ວິສະວະກອນດ້ານຊົນລະປະທານ ທີ່ມີຄວາມຮູ້-ຄວາມສາມາດ, ມີປະສົບການ, ຮູ້ສ້າງເສັ້ນສະແດງແຜນການກໍ່ສ້າງ ແລະ ມີຜົນງານກ່ຽວກັບວຽກງານກໍ່ສ້າງ-ສ້ອມແປງ ຊົນລະປະທານໃນ 3 ປີຜ່ານມາ ໂດຍມີໃບຢັ້ງຢືນກ່ຽວກັບຜົນງານຈາກພາກສ່ວນທີ່ກ່າວຂ້ອງ;

5). ມີພາຫະນະກົນຈັກ, ອຸປະກອນ ແລະ ເຄື່ອງມືຮັບໃຊ້ທາງດ້ານວິສະກຳ ຢູ່ພາກສະໜາມທີ່ມີຄຸນນະພາບ ແລະ ທັນສະໄໝ ຊຶ່ງໄດ້ຜ່ານການກວດກາຈາກຂະແໜງຊົນລະປະທານ ;

6). ມີປະສົບການ ແລະ ຜົນງານຕົວຈິງທີ່ເໝາະສົມກັບປະເພດ ແລະ ຂະໜາດຂອງໂຄງການຊົນລະປະທານທີ່ຈະເຂົ້າຮ່ວມປະມູນໃນຄັ້ງນີ້;

7). ບໍ່ເປັນຜູ້ທີ່ມີຜົນປະໂຫຍດຊໍ້າຊ້ອນທີ່ກ່ຽວຂ້ອງກັບການຈັດຊື້-ຈັດຈ້າງດັ່ງກ່າວ ເຊັ່ນ: ເປັນຜູ້ທີ່ມີສ່ວນຮ່ວມອອກແບບ ຫຼື ກະກຽມເອກະສານໃນການປະມູນ;

8). ມີຄວາມສາມາດທາງດ້ານການປະພຶດ ຫຼື ບໍ່ຖືກສານຕັດສິນລົງໂທດຕັດອິດສະຫຼະພາບກ່ຽວກັບການດໍາເນີນທຸລະກິດ.

9). ບໍລິສັດຕ້ອງຊື້ຊອງ ແລະ ປະກອບເອກະສານສົ່ງຊອງປະມູນ ຕາມກໍານົດເວລາທີ່ກໍານົດໃນ ປະກາດແຈ້ງການໃນຊອງປະມູນ, ຊອງປະມູນທີ່ຊື້ໄປແລ້ວແມ່ນບໍ່ສາມາດສົ່ງຄືນໄດ້;

10). ບໍລິສັດຕ້ອງສະເໜີລາຄາຄົບຖ້ວນໃນທຸກໆລາຍການ ຕາມບໍລິມາດວຽກທີ່ກໍານົດໃນ ໃບຄິດໄລ່ຄາລາ (BOQ), ໃນການຄິດໄລ່ບໍລິມາດແມ່ນກໍານົດເອົາເລກຫຼັງຈຸດ 2 ຕົວເລກ ແລະ ຄິດໄລ່ເປັນເງິນກີບ ແລະ ປະກອບໜັງສືສະເໜີລາຄາປະມູນ ຕາມແບບຟອມທີ່ກໍານົດໄວ້, ຕົວເລກມູນຄ່າ, ລາຄາຫົວໜ່ວຍ ແລະ ລາຄາລວມ ຕ້ອງຈະແຈ້ງ, ບໍ່ມີຮອຍຂີດຂ້າ ແລະ ເປື້ອນເປິ;

11). ລາຄາລວມຂອງບໍລິສັດ ແມ່ນອະນຸຍາດຜິດດ່ຽງ +/- 10% ຂອງມູນຄ່າລາຄາກາງ, ບໍລິສັດໃດທີ່ສະເໜີລາຄາໃກ້ຄຽງທີ່ສຸດກັບລາຄາກາງ ຊຶ່ງຈັດເປັນທີ 1 ບໍ່ໝາຍວ່າເປັນບໍລິສັດທີ່ຊະນະການປະມູນ ຈົນກວ່າຄະນະກໍາມະການໄດ້ກວດກາເງື່ອນໄຂຕ່າງໆຄົບຖ້ວນ ແລະ ສະເໜີຂັ້ນເທິງຮັບຮອງແລ້ວ ຈຶ່ງຖືວ່າ: ຊະນະການປະມູນ;

12). ທຸກໆບໍລິສັດທີ່ເຂົ້າຮ່ວມການປະມູນ ແມ່ນມີຄວາມຍິນດີ ຕໍ່ການຕັດສິນຂອງຄະນະກໍາມະການປະມູນ ໂດຍບໍ່ມີບັນຫາໃດໆທັງສິ້ນ.

ດັ່ງນັ້ນ, ຈຶ່ງອອກບົດແນະນໍາສະບັບນີ້ ເພື່ອເປັນບ່ອນອີງໃນການປະມູນ ໂຄງການກໍ່ສ້າງ-ສ້ອມແປງຊົນລະປະທານດ້ວຍງົບປະມານຂອງລັດໃນຄັ້ງນີ້.

9/6

**ຫົວໜ້າພະແນກ**

ພະແນກ ກະສິກໍາ ແລະ ສິ່ງແວດລ້ອມ ແຂວງຈໍາປາສັກ

Sayutt

ປອ. ໄຊຍະສິດ ວິລະພັດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງ ຈໍາປາສັກ
ພະແນກກະສິກໍາ ແລະ ສິ່ງແວດລ້ອມ

--2038
ເລກທີ........../ກສຂ
ຈໍາປາສັກ, ວັນທີ 15-06-2026

# ບົດແນະນໍາ

## ກ່ຽວກັບການປະມູນໂຄງການ
## ຟື້ນຟູ-ສ້ອມແປງລະບົບຊົນລະປະທານ ປະຈໍາປີ 2026

- ອີງຕາມ: ຕາມກົດໝາຍວ່າດ້ວຍການລົງທຶນຂອງລັດ (ສະບັບປັບປຸງ) ສະບັບເລກທີ 72/ສພຊ ລົງວັນທີ 15 ທັນວາ 2015
- ອີງຕາມ: ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ ລົງວັນທີ 2 ພະຈິກ 2017;
- ອີງຕາມ: ກົດໝາຍຊົນລະປະທານ ສະບັບເລກທີ 26/ສພຊ ລົງວັນທີ 12 ທັນວາ 2012;
- ອີງຕາມ ຂໍ້ຕົກລົງຂອງປະທານຄະນະກໍາມະການປົກຄອງແຂວງ ຈໍາປາສັກ ສະບັບເລກທີ 219/ຄປຂ.ຈສ, ລົງວັນທີ 12 ມີນາ 2026 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງພະແນກກະສິກໍາ ແລະ ສິ່ງແວດລ້ອມ ແຂວງຈໍາປາສັກ.

ພະແນກກະສິກໍາ ແລະ ສິ່ງແວດລ້ອມ ແຂວງຈໍາປາສັກ ອອກບົດແນະນໍາກ່ຽວກັບລະບຽບການປະມູນໂຄງການກໍ່ສ້າງ ແລະ ສ້ອມແປງຊົນລະປະທານ ໃນບ້ວງເງິນການລົງທຶນຂອງລັດ ປະຈໍາປີ 2026 ດັ່ງນີ້:

### ມາດຖານ ແລະ ເງື່ອນໄຂຂອງບໍລິສັດ ທີ່ຈະເຂົ້າຮ່ວມການປະມູນ ມີຄື :

1). ເປັນນິຕິບຸກຄົນ ພາຍໃນປະເທດ ມີເລກປະຈໍາຕົວເສຍອາກອນ ຫຼື ໃບຢັ້ງຢືນການປະຕິບັດພັນທະພາສີ ອາກອນ ແລະ ພັນທະອື່ນໆ ຕາມກົດໝາຍຢ່າງຄົບຖ້ວນ.

2). ມີໃບທະບຽນວິສະຫະກິດ ແລະ ໃບອະນຸຍາດດໍາເນີນທຸລະກິດກໍ່ສ້າງຊົນລະປະທານ ປະຈໍາປີ 2026;

3). ມີຖານະການເງິນທີ່ໝັ້ນຄົງ ມີທຶນພຽງພໍໃນການກໍ່ສ້າງໂຄງການໃຫ້ສໍາເລັດຕາມສັນຍາ ໂດຍບໍລິສັດຕ້ອງມີທຶນໝູນວຽນບໍ່ຫຼຸດ 70% ຂອງມູນຄ່າໂຄງການ ແລະ ຕ້ອງມີເງິນຄໍ້າປະກັນການປະມູນ 2% ຂອງມູນຄ່າໂຄງການ ໂດຍອອກເປັນເຊັກ ຫຼື ໃບຢັ້ງຢືນຈາກທະນາຄານພາຍໃນປະເທດ (Bank Quarantee), ເງິນຄໍ້າປະກັນດັ່ງກ່າວ ແມ່ນສາມາດຖອນຄືນໄດ້ພາຍຫຼັງທີ່ເຊັນສັນຍາແລ້ວ;



SCAN AnyScanner

ແລະ ສິ່ງຊອງປະມູນກ່ອນເວລາ 9 ໂມງ 00 ນາທີ ຂອງວັນທີ 20 ສິງຫາ 2026 ແລະ ຈະໄດ້ເປີດຊອງປະມູນ ຊ້ອງໜ້າຄະນະກຳມະການ ໃນເວລາ ເວລາ 9:30 ໂມງ ຂອງວັນທີ 20 ສິງຫາ 2026 ຢູ່ທີ່ຫ້ອງປະຊຸມພະແນກກະສິກຳ ແລະ ສິ່ງແວດລ້ອມແຂວງ (ສຳນັກງານຫຼັກ 2)

ດັ່ງນັ້ນ, ຈຶ່ງອອກໜັງສືເຊີນມາຍັງບັນດາບໍລິສັດທີ່ສົນໃຈເຂົ້າຮ່ວມໃນການປະມູນໃນຄັ້ງນີ້.

**ຫົວໜ້າພະແນກ**

ພະແນກ ກະສິກຳ ແລະ ສິ່ງແວດລ້ອມ ແຂວງຈຳປາສັກ

ປອ. ໄຊຍະສິດ ວິລະພັດ